## ສະເດັດໄປຕີເມືອງພິສນຸໂລກ ຄັ້ງທີ 1

ຝ່າຍນະຄອນສີອະຍຸທະຍາຄັ້ງນັ້ນ, ສົມເດັດພຣະມະຫາຈັກກະພັດພຣະເຈົ້າແຜ່ນດິນຜູ່ເປັນພຣະຣາຊະບິດາ ຂອງນາງເທບກະສັດຕີ ໄດ້ສະເດັດອອກບວດ ພຣະມະຫິນທະຣາຊາ ໂອຣົດໄດ້ເປັນເຈົ້າແຜ່ນດິນ. ພຣະມະຫິນທະຣາຊາ ມີຄວາມຄຽດແຄ້ນໃຫ້ພຣະມະຫາທັມມະຣາຊາ[1] ເຈົ້າເມືອງພິສນຸໂລກວ່າເຈົ້າເມືອງພິສນຸໂລກເອົາໃຈຝັກໃຝ່ຕໍ່ພຣະເຈົ້າຫົງສາວະດີ, ພຣະມະຫິນທະຣາຊາ ຈຶ່ງມີພຣະຣາຊະສານລັບມາຖວາຍ ພຣະໄຊຍະເຊດຖາທິຣາດເຈົ້າວ່າ ໃຫ້ຍົກໄປຕີເອົາເມືອງພິສນຸໂລກ. ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ໄດ້ຫົງຊາບຣາຊະສານນັ້ນແລ້ວ ກໍດີພຣະທັຍ ຈຶ່ງມີພຣະຣາຊະອາດຍາໃຫ້ພຣະຍາຈັນກອງນາງ 1 ພຣະຍາຂາວດອກຫມາກ 1 ພຣະຍາຣາຊະວັດ 1 ພຣະຍາຍົດລືກຣບ 1 ເກນທັບໄດ້ພົນ 100.000 ຊ້າງ 1.000 ຕົວ ຍົກໄປຕີເອົາເມືອງເຂມ[2].

ສ່ວນພຣະອົງເກນພົນໄດ້ 280.000 ຄົນ ກັບຊ້າງ 2.500 ຕົວ ຍົກລົງໄປເມືອງພິສນຸໂລກສະເດັດພຣະຣາຊະດຳເນີນຍົກທັບຫລວງລົງໄປທາງເມືອງນະຄອນໄທ ເຖິງເມືອງພິສນຸໂລກໃນເດືອນຍີ່ແຮມ 13 ຄ່ຳ ປີຈຸລະສັກຣາດ 929 (ຄ.ສ. 1567) ປະທັບຕັ້ງຄ້າຍຢູ່ຕຳບົນໂພກຮງ ໄກຈາກປະຕູເມືອງພິສນຸໂລກປະມານ 2 ກິໂລແມັດເຄິ່ງ. ທັບພຣະຍາແສນສຸຣິນ ຕັ້ງຢູ່ບ້ານເຕົາໄຫ ທັບພຣະຍາມືໄຟຕັ້ງຢູ່ວັດເຂົາພາມ, ທັບພຣະຍານະຄອນ ຕັ້ງຢູ່ບ້ານສະແກ້ວ, ທັບພຣະຍາມືເຫລັກ ຕັ້ງຢູ່ບ້ານບາງສະແກ ຣວມເປັນ 5 ທັບ.

ກ່ອນທັບລາວຍັງບໍ່ທັນໄດ້ຍົກໄປເຖິງເມືອງພິສນຸໂລກນັ້ນ ພຣະມະຫາທັມມະຣາຊາເຈົ້າເມືອງພິສນຸໂລກ ບໍ່ໄດ້ຊາບກົນອຸບາຍຂອງພຣະມະຫິນທະຣາຊາ ຄັນໄດ້ຊາບວ່າ ກອງທັບລ້ານຊ້າງຈະຍົກລົງໄປເອົາເມືອງ ຈຶ່ງສົ່ງຂ່າວໄປຫາພຣະມະຫິນທະຣາຊາ ໃຫ້ຍົກທະຫານຂຶ້ນມາຊ່ອຍ. ພຣະມະຫິນທະຣາຊາ ຈຶ່ງສົ່ງພຣະຍາສີຫາຣາຊະເດໂຊ ກັບພຣະທ້າຍນ້ຳຂຶ້ນມາກ່ອນ ແລ້ວສັ່ງເປັນຄວາມລັບວ່າ ຖ້າກອງທັບລ້ານຊ້າງເຂົ້າເມືອງໄດ້ແລ້ວ ໃຫ້ກຸມຈັບເອົາ ພຣະມະຫາທັມມະຣາຊາໄວ້. ພຣະຍາສີຫາຣາຊ ມາເຖິງເມືອງພິສນຸໂລກ ເລີຍບອກຄວາມລັບອັນນີ້ ແກ່ພຣະມະຫາທັມມະຣາຊາ. ດັ່ງນັ້ນ ພຣະມະຫາທັມມະຣາຊາ ຈຶ່ງຟ້າວແຕ່ງຣາຊະທູດ ໄປຂໍກອງທັບພະມ້າມາຊ່ອຍ.

ຝ່າຍພຣະມະຫິນທະຣາຊາ ຄັນໄດ້ຊາບວ່າ ກອງທັບກຸງສີສັຕນາຄະນະຫຸດ ລົງມາໃກ້ເມືອງພິສນຸໂລກແລ້ວ ຈຶ່ງຍົກກອງທັບເຮືອຂຶ້ນມາຕາມແມ່ນ້ຳ ແລ້ວມີຫນັງສືບອກເຂົ້າໄປໃນເມືອງວ່າ

---

[1] ພຣະມະຫາທັມມະຣາຊາ ແມ່ນອ້າຍເຂີຍຂອງພຣະມະຫິນທະຣາຊາ

[2] ເມືອງເຂມ ແມ່ນເມືອງຊຽງຕຸງ